ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ໄມ້ເກດສະໜາ

( ສະບັບທົດລອງໃຊ້ )



ຂໍ້ມູນຈາກບ້ານປຸ່ງປ່າຕາວ

ເມືອງຄຳເກີດ, ແຂວງບໍລິຄຳໄຊ

ຂຽນໂດຍ: ອາຈານ ດວງດີ

2007

ຄວາມຮູ້ທ້ອງຖິ່ນ

# "ໄມ້ເກດສະໜາ"

ຂໍ້ມູນຈາກ ບ້ານ ປຸ່ງປ່າຕາວ ເມືອງຄຳເກີດ,
ແຂວງບໍລິຄຳໄຊ

ຂຽນໂດຍ: ອ.ຈ ດວງດີ

ຮຽບຮຽງໂດຍ:

**ອ.ຈ ບຸນຍົງ ແກ້ວຄູນເມືອງ**

**ອ.ຈ ວັນແສງ ອະທິຖານ**

ພິມແລະຈັດໜ້າໂດຍ: ນ. ສຸກັນຍາ ສີວິໄຊ

ແຕ້ມໂດຍ: ທ. ພອນຄຳ

ເຈົ້າຂອງ: ຫ້ອງການສຶກສາເມືອງຄຳເກີດ
ແຂວງບໍລິຄຳໄຊ ແລະສູນອົບຮົມຮ່ວມ
ພັດທະນາ

ອຸປະຖຳໂດຍ:

New Zealand Agency for International Development ( NZAID )

# ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຂຽນ ແລະ ໃຫ້ຂໍ້ມູນຂອງຄູອາຈານແລະຊາວບ້ານ ປຸ່ງປ່າຕາວ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ຊຶ່ງເປັນການຮັບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດຶກດຳບັນຈົນເຖິງປະຈຸບັນນີ້.

ປຶ້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ຊຶ່ງເປັນສະບັບທົດລອງໃຊ້ ແລະ ຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກພ້ອມກັນນັ້ນຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປັ່ງແປງຕາມຄວາມເໝາະສົມ.

**ຄະນະຈັດທຳ**

## ສາລະໜ້າຮູ້

## " ໄມ້ເກດສະໜາ "

ໄມ້ເກດສະໜາແມ່ນໄມ້ຊະນິດໜຶ່ງທີ່ມີລາຄາແພງ,ເກີດຈາກທຳມະຊາດ ແລະ ມີຢູ່ທົ່ວທຸກບ່ອນໃນປະເທດລາວ ເປັນຕົ້ນແມ່ນເຂດພູດອຍ

ໄມ້ເກດສະໜາເປັນໄມ້ເນື້ອອ່ອນ, ມີລຳຕົ້ນໃຫຍ່ໜ້າຕັດ 80 – 90 ຊັງຕີແມັດ, ຍາວ 40 – 50 ແມັດ ຍ້ອນເປັນໄມ້ທີ່ມີລາຄາສູງ, ດັ່ງນັ້ນຈຶ່ງເຮັດໃຫ້ໄມ້ເກດສະໜາທີ່ເກີດຈາກທຳມະຊາດນັ້ນໃກ້ຈະສູນພັນໄປຍ້ອນການຂຸດຄົ້ນຂອງປະຊາຊົນ

ສະນັ້ນມາເຖິງປະຈຸບັນນີ້ ພັກແລະລັດຖະບານລາວເຮົາຈຶ່ງໄດ້ມີການສົ່ງເສີມໃຫ້ມີການປູກໄມ້ເກດສະໜາຂາຍເພາະໄມ້ເກດສະໜານັ້ນປູກງ່າຍຈຶ່ງເຮັດໃຫ້ປະຊາຊົນຈຳນວນບໍ່ໜ້ອຍນິຍົມກັນປູກເພື່ອຂາຍເປັນສິນຄ້າທັງເປັນການລ້ຽງລາຍໄດ້ໃຫ້ກັບຄອບຄົວນຳອີກ

### 1. ການກະກຽມເບົ້າກ້າເບ້ຍ

- ດິນ
- ຝຸ່ນຄອກ
- ແກ່ນໄມ້ເກດສະໜາ
- ຖົງຢາງກ້າເບ້ຍ(ຕາມຄວາມເໝາະສົມ)

2. <u>ການກ້າເບ້ຍ</u>

- ເອົາແກ່ນໄມ້ເກດສະໜາປັກລົງໂດຍເອົາຫາງຫົວປັກລົງ ແລະ ບໍ່ໃຫ້ເອົາດິນຖົມໝົດ

3. ການ<u>ບົວລະບັດ</u>

- ຕ້ອງເກັບໄວ້ບ່ອນທີ່ມີອາກາດເໝາະສົມ ( ຮົ່ມຜ້າກັບແສງ )
- ຫົດນ້ຳໜຶ່ງເທື່ອທຸກມື້
- ບົວລະບັດໂດຍບໍ່ໃຫ້ສັດກິນພືດມາທຳລາຍເດັດຂາດ (ຖ້າບໍ່ງາມໃຫ້ໃສ່ປຸຍເລັ່ງຕົ້ນ)
- ເບ້ຍໄມ້ເກດໄດ້ 1 ປີກໍສາມາດປູກໄດ້

**ການກະກຽມແລະວິທີປູກ**

ກ່ອນຈະທຳການປູກໄມ້ເກດສະໜາບັ້ນແມ່ນເຮົາຈະຕ້ອງໄດ້ກຽມ 2 ຢ່າງຄື:

- ກະກຽມສະຖານທີ່ທີ່ຈະປູກ ( ກຽມດິນ )



- ກຽມແນວພັນ( ເບ້ຍໄມ້ເກດສະໜາ )



(ເບ້ຍໄມ້ເກດສະໜາ)

ພໍຮອດເດືອນ 3 – 4 ພວກເຮົາຄວນຖາງເນື້ອທີ່ທີ່ຈະປູກໄມ້ເກດສະໜາ ປະໄວ້ປະມານ 15 – 20 ວັນ ແລ້ວກໍຈູດປ່າທີ່ຖາງໄວ້ນັ້ນ, ຕົກມາຮອດທ້າຍເດືອນ 5 – 6, ພໍເມື່ອຝົນຕົກປີໃໝ່ພວກເຮົາກໍຈະເລີ່ມລົງມືປູກ

ສໍາລັບການເລືອກແນວພັນຫລືເບ້ຍ, ເຮົາຄວນ

- ເລືອກເອົາເບ້ຍທີ່ແຂງແຮງແລະສົມບູນດີ



ວິທີການປູກເຮົາຄວນເຮັດຕາມຂັ້ນຕອນດັ່ງນີ້:

ຕັດເອົາໄມ້ມາປັກຫລັກເປັນແຖວໃຫ້ຊື່ສະເໝີກັນຕາມເນື້ອທີ່, ໄລຍະຫ່າງແມ່ນ 3 X 3 ແມັດ, ໃນການປູກຫລັງຈາກນັ້ນຂຸດຂຸມຕາມຫລັກ 20 X 20 ຊັງຕີແມັດ, ໝາຍຂະໜາດຂອງຂຸມແມ່ນລວງກວ້າງ ເລິກ 20 – 30 ຊັງຕີແມັດ



ເມື່ອຂຸດຂຸມແລ້ວເຮົາກໍເອົາເບ້ຍລົງຂຸມ, ໃນການປູກນີ້ຕ້ອງເຮັດດ້ວຍຄວາມລະມັດລະວັງຄ່ອຍໆຈີກເປົ້າເພື່ອບໍ່ໃຫ້ດິນຢູ່ໃນເປົ້ານັ້ນແຕກ, ເພາະຖ້າຫາກດິນແຕກຈະເຮັດໃຫ້ຮາກຂອງເບ້ຍໄມ້ຂາດແລະອາດຈະປູກບໍ່ຂຶ້ນ( ຕາຍ ) ໄດ້.

***ການບົວລະບັດຮັກສາ:***

ໄມ້ເກດສະໜາແມ່ນໄມ້ຊະນິດໜຶ່ງທີ່ມີສັດຕູພືດມັກມາທຳລາຍ ໂດຍສະເພາະແມ່ນໃນໄລຍະທີ່ອາຍຸຂອງໄມ້ຍັງອ່ອນເປັນຕົ້ນແມ່ນ: ຈີ່ຫລໍ່, ຕັກແຕນ, ປວກ ແລະບົ້ງ ສະນັ້ນເຮົາຄວນໝັ່ນເສຍຫຍ້າ, ຂ້າແມງໄມ້ແລະຕິດຕາມເບິ່ງແຍງຢູ່ຕະຫລອດເວລາ

ເມື່ອເບ້ຍໄມ້ມີອາຍຸ 7 – 8 ປີເຮົາກໍສາມາດຕັດຂາຍ ແລະສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ແລ້ວ.

ນອກຈາກການປູກໄມ້ເກດສະໜາຈະສາມາດສ້າງລາຍໄດ້ທີ່ດີໃຫ້ແກ່ຄອບຄົວໄດ້ແລ້ວນັ້ນຍັງເປັນການຮັກສາທຳມະຊາດໃຫ້ສວຍງາມນຳອີກ.



## ກາບ: ປູກໄມ້ເກດສະໜາ

ດິນບ້ານເຮົາ ອຸດົມສົມບູນ
ເຮົາເພີ່ມພູນ ພາກັນປູກໄມ້
ເອົາໃຈໃສ່ ດຸໝັ່ນຫ້າວຫັນ
ເຮົາພາກັນ ຂຸດຂຸມເປັນແລວ
ປູກເປັນແຖວ ຫຼຽວເບິ່ງຈຶ່ງງາມ
ຄົນກໍຖາມ ວ່າສວນຂອງໃຜ
ແຂກທາງໄກ ມາຊົມມາແວ່
ມີລ້ວນແຕ່ ໄມ້ເກດສະໜາ



## ເຊື້ງ: ກ້າເບ້ຍໄມ້ເກດສະໜາ

ໂຮ.......................................ຮິວ

ເອົາມາເຮົາມາ    ໝູ່ພວກພີ່ນ້ອງ
ເຮົາເຮັດຖືກຕ້ອງ    ຕາມພັກນຳພາ
ພ້ອມກັນຮີບມາ    ຜອງຄົນໃສ່ເບົ້າ
ທັງຂ້ອຍແລະເຈົ້າ    ຢ່າໄດ້ຊັກຊ້າ
ໄມ້ທຳມະດາ    ແຕ່ມັນມີຄ່າ
ລົມຄຳຄົນຊ່າ    ໄມ້ເກດສະໜາ
ມັນມີລາຄາ    ຕ້ອງພາກັນປູກ
ໄວ້ໃຫ້ພວກລູກ    ພວກຫຼານພາຍຫລັງ
ມາພ້ອມກັນຟັງ    ຢ່າໄດ້ລໍຊ້າ
ເວລາບໍ່ຖ້າ    ຈະບໍ່ທັນເຂົາ
ທັງພວກຜູ້ເຖົ້າ    ນ້ອຍໃຫຍ່ຍິງຊາຍ
ປູກໃຫ້ໄດ້ຫຼາຍ    ຕັດຂາຍບໍ່ຂາດ
ສົ່ງອອກຕະຫຼາດ    ການຄ້າຕ່າງແດນ
ໄດ້ເງິນເປັນແສນ    ເປັນໝື່ນເປັນລ້ານ
ຢ່າໄດ້ຂີ້ຄ້ານ    ນອນເວັ້ນຕື່ນສວາຍ

ໂຮ............................ຮື້ວ



## ເລື່ອງ ໄມ້ອ່ອນກາຍເປັນແຂງ

ແຕ່ກີ້ແຕ່ກ່ອນມີພໍ່ເຖົ້າຄົນໜຶ່ງລາວມີຊື່ວ່າ: ພໍ່ເຖົ້າພົມມາ, ຢູ່ມາມື້ໜຶ່ງພໍ່ເຖົ້າໄດ້ພາຫລານຊາຍໄປໄຮ່ໝາກກ້ວຍທີ່ຢູ່ເທິງຈອມພູນຳ, ເມື່ອເອົາໝາກກ້ວຍໄດ້ແລ້ວພໍ່ເຖົ້າກໍພາຫລານກັບລົງມາຈາກພູ, ພໍມາຮອດເຄິ່ງທາງບັງເອີນສາຍກະເປົ໋ຂອງຜູ້ເປັນຫລານຂາດ,ພໍ່ເຖົ້າເຫັນດັ່ງນັ້ນເລີຍບອກໃຫ້ຫລານຊາຍໄປລອກເອົາເປືອກໄມ້ສາຄົງທີ່ຢູ່ຕໍ່ໜ້ານັ້ນມາໃຫ້ເມື່ອໄດ້ແລ້ວພໍ່ເຖົ້າພົມມາຈຶ່ງໄດ້ຈັດການເຮັດສາຍກະເປົ໋ໃໝ່ທັງເຮັດໄປທັງບອກກັບຫລານຊາຍວ່າ: " ໄມ້ອັນນີ້ເປືອກຂອງມັນມີກິ່ນຫອມຫລາຍໃຫ້ຫລານຈື່ຈຳເອົາໄວ້ເນີ, ຊາວບ້ານເຮົາເພິ່ນໄມ້ຊະນິດນີ້ເອີ້ນວ່າ: ໄມ້ສາຄົງ "

ຕໍ່ມາໄດ້ມີພວກພໍ່ຄ້າພາກັນມາຊອກຊື້ໄມ້ເກດສະໜາແຕ່ຊາວບ້ານພາກັນບໍ່ຮູ້, ເມື່ອເຫັນແນວນັ້ນພໍ່ຄ້າເລີຍເອົາຕົວຢ່າງມາໃຫ້ເບິ່ງຊາວບ້ານຈຶ່ງໄດ້ຮູ້ວ່ານັ້ນແມ່ນໄມ້ສາຄົງນັ້ນເອງເຮັດໃຫ້ເຂົາເຈົ້າພາກັນເຂົ້າປ່າຊອກຫາໄມ້ເກດສະໜາຫລືໄມ້ສາຄົງນີ້ມາຂາຍ, ຮອດປະຈຸບັນນີ້ຊາວບ້ານກໍຍັງພາກັນນິຍົມປູກໄມ້ເກດສະໜານີ້ໄວ້ຂາຍເພາະມັນມີລາຄາສູງ

## ເກມ: " ແຂ່ງຂັນເອົາເບ້ຍໄປປູກ "

ຈຸດປະສົງ: ເພື່ອໃຫ້ເດັກມີຄວາມສາມັກຄີ

ອຸປະກອນ: ພືດໄມ້

ຈຳນວນຄົນຫລິ້ນແລະເວລາ: ບໍ່ຈຳກັດ

ວິທີດຳເນີນການຫລິ້ນ:

1. ແບ່ງນັກຮຽນອອກເປັນ 2 ກຸ່ມ
2. ຄູວາງພືດໄມ້ໄວ້ເປັນ 2 ກອງ
3. ຈາກນັ້ນໃຫ້ຜູ້ເຂົ້າຮ່ວມລຽນແຖວກັນ, ເມື່ອຄູນັບ1 ຮອດ 3 ໃຫ້ຜູ້ຢູ່ຫົວແຖວແລ່ນໄປເອົາພືດໄມ້ທີ່ວາງໄວ້ນັ້ນ 1 ອັນ, ຫລັງຈາກນັ້ນໃຫ້ແລ່ນກັບຄືນມາແຖວແຕ່ຕ້ອງໄປຕໍ່ທາງຫລັງເຮັດແບບນັ້ນຈົນພືດໄມ້ໝົດ
4. ກຸ່ມໃດແລ້ວກ່ອນແມ່ນຊະນະ



## ລຳເຕີ້ຍ: " ປູກໄດ້ຂາຍເປັນເງິນ "

| | |
|---|---|
| ມາເຖີດ | ພີ່ນ້ອງທັງຫລາຍ |
| ມາປູກຕົ້ນໄມ້ | ເກດສະໜາ |
| ທຸກຄົນ | ຢ່າໄດ້ລໍຊ້າ |
| ຈະເສຍເວລາ | ຖິ້ມໄປງ່າຍໆ |
| ຂໍໃຫ້ຕັ້ງໃຈ | ປູກໄມ້ຊ່ວຍກັນມັນເປັນລາຄາ |
| ທຸກຄົນຈົ່ງຮີບມາ | ໄມ້ເກດສະໜານັ້ນລາຄາແພງ |
| R ກະຈັ່ງແພງເອີຍຫລ້າ | ມາຮ່ວມກັນເດີລະແມ່ນສິບຕໍ່ |
| ມໍລະດົກ | ພໍ່ແມ່ສ້າງໄວ້ |
| ໃຫ້ເຮົາໄດ້ | ແມ່ນໄຕ່ຕາມ |
| ໂອຍນັ້ນລະນາ | ນອນໃນນີ້ນາ ( 2 ) |
| ຈົ່ງສາມັກຄີ | ກັນດີໄວ້ |
| ຮ່ວມແຮງຮ່ວມໃຈ | ກັບເດີທ່ານ |



## ເພງ: " ໄມ້ລາຄາສູງ "

ໄມ້ເກດ ນັ້ນລາຄາສູງ
ອາວອາປ້າລຸງ ເພິ່ນນັ້ນເຄີຍປູກມາ
ໄມ້ເກດ ນັ້ນມີຄຸນຄ່າ ( 2 )
ພວກເຮົານັ້ນນາ ຕ້ອງຮ່ວມແຮງຮ່ວມໃຈ
ຟ້າວໄປ ປູກໃຫ້ເປັນສວນ
ໃຫ້ເປັນຂະບວນ ປູກໄມ້ໄວ້ຂາຍ
ເຮົາຢ່າ ໄດ້ບອນຕື່ນສວາຍ(2)
ທຸກຄົນຕ້ອງຊ່ວຍ ປູກໄມ້ເກດລາຄາແພງ



## ບົດເລກ

( ປ. 4 - ປ. 5 )

ໄມ້ເກດສະໜາ 1 ຕົ້ນມີນ້ຳໜັກ 13 ກິໂລກຼາມຮູ້ວ່າລາຄາກິໂລກຼາມລະ 3.000 ກີບ

ຖາມວ່າ, ເພິ່ນຂາຍໄມ້ເກດສະໜາຕົ້ນໜຶ່ງໄດ້ເງິນຈັກກີບ ?

( ປ. 5 ) - ຖ້າເອົາມາຕື່ມອີກ 5 ຕົ້ນທີ່ມີນ້ຳໜັກເທົ່າກັນຈະໄດ້ເງິນທັງໝົດເທົ່າໃດ ?

## ບົດເລກ ປ.2

ນາງນ້ອຍປູກຕົ້ນໄມ້ເກດສະໜາຢູ່ເດີ່ນບ້ານປີທີໜຶ່ງ ປູກ 12 ຕົ້ນ, ປີທີ 2 ປູກຕື່ມ 10 ຕົ້ນ ແລະ ປີທີ 3 ປູກ 11 ຕົ້ນ

ຖາມວ່າ, ທັງສາມປີລາວປູກຕົ້ນໄມ້ເກດສະໜາໄດ້ຈັກຕົ້ນ ?

